ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະຖານເອກອັກຄະລັດຖະທູດ
ແຫ່ງ ສປປ ລາວ ທີ່ ບຣຸກແຊນ

## ໂທລະເລກທາງລັດຖະການ

ເຖິງ : ກະຊວງການຕ່າງປະເທດ (ກົມເອີຣົບ-ອາເມຣິກາ) ທີ່ນະຄອນຫຼວງວຽງຈັນ.
ຈາກ : ສະຖານເອກອັກຄະລັດຖະທູດ ສປປ ລາວ ທີ່ບຣຸກແຊນ.
ເລກທີ : 164 /ສລບຊ.ທກ.2012, ລົງວັນທີ 12 ພະຈິກ 2012.

ສະຖານທູດຂໍຖືເປັນກຽດລາຍງານມາຍັງກະຊວງຊາບວ່າ ຄະນະກຳມາທິການເອີຣົບ ໄດ້ແຈ້ງໃຫ້ຊາບວ່າ ສະຫະພາບເອີຣົບ ໄດ້ຮັບຮອງແລະພິມເຜີຍແຜ່ ລະບຽບການໃໝ່ ວ່າດ້ວຍ ລະບົບການຜ່ອນຜັນພາສີນຳເຂົ້າສິນຄ້າຈາກປະເທດກຳລັງພັດທະນາ(Generalised System of Preferences= GSP ) ແລະຈະມີຜົນບັງຄັບໃຊ້ ໃນວັນທີ 1 ມັງກອນ 2014.

ໃນລະບົບ GSP ໃໝ່ນີ້ ປະກອບດ້ວຍ 3 ປະເພດ : (1) GSP ທົ່ວໄປແມ່ນສຳລັບປະເທດກຳລັງພັດທະນາທີ່ນອນໃນບັນຊີທັງໝົດ 176 ປະເທດ, (2) GSP+ ແມ່ນສຳລັບປະເທດກຳລັງພັດທະນາ ແຕ່ປະ ຕິບັດມາດຕະການເພື່ອການພັດທະນາແບບຍືນຍົງ ແລະການປົກຄອງແບບປະຊາທິປະໄຕແລະສິດທິມະ ນຸດ ໂດຍໃຫ້ສັດຕະຍາບັນ ແລະຈັດຕັ້ງປະຕິບັດສົນທິສັນຍາໃນຂົງເຂດເຫລົ່ານີ້; (3) EBA (Everything But Arms) ນະໂຍບາຍນີ້ ແມ່ນ ຍົກເວັ້ນພາສີສຳລັບສິນຄ້າທຸກປະເພດ ຍົກເວັ້ນ ອາວຸດ, ວາງອອກສຳລັບປະເທດດ້ອຍພັດທະນາ 48 ປະເທດ ໃນນັ້ນ ມີ ສປປ ລາວ.

ລະບຽບການ ວ່າດ້ວຍລະບົບ GSP ໃໝ່ນີ້ ໄດ້ພິມເຜີຍແຜ່ ໃນວາລະສານທາງການຂອງສະຫະພາບເອີຣົບທີ່ : http://ec.europa.eu/trade/wider-agenda/development/generalised-system-

of-preferences/index_en.htm. ພາກສ່ວນທີ່ກ່ຽວຂ້ອງ ຂອງ ລາວສາມາດເຂົ້າຊອກຮູ້ລາຍລະອຽດໄດ້ດ້ວຍທາງເວັບໄຊ້ ຕາມທີ່ຢູ່ຂ້າງເທິງນີ້.

ສະເໜີໃຫ້ກະຊວງແຈ້ງໃຫ້ພາກສ່ວນທີ່ກ່ຽວຂ້ອງ ຂອງລາວຊາບຕາມທາງຄວນດ້ວຍ.(ຈົບ)

ບຸນແພງ ຊາຍກັນຍາ
ອັກຄະລັດຖະທູດທີ່ປາລີ
ອຸປະທູດຊົ່ວຄາວ